PCD

Phousy Construction and Development Public

ANNUAL REPORT 2017



Phousy Construction and Development Public
5th Floor, Vientiane Plaza Hotel, Sailom Road, Hatsady Village,
Chanthabouly District, Vientiane, Lao PDR.
Tel/Fax: (856-21)265394; E-mail: info@pcdlao.com ; website: www.pcdlao.com

ເນື້ອໃນ
Contents

- ສານຈາກທ່ານປະທານສະພາບໍລິຫານ/Massage from Chairman of the Board of Directors .....
- ຄວາມເປັນມາຂອງ PCD ໂດຍຫຍໍ້/ PCD at a Glance .....
- ໂຄງຮ່າງການຈັດຕັ້ງບໍລິສັດ / Board of Directors .....
- ໂຄງການທີ່ພົ້ນເດັ່ນ / Highlight Projects .....
- ການພັດທະນາສັງຄົມ / Caring for Society .....
- ວຽກງານດ້ານບຸກຄະລາກອນ / Human Resource Management.....
- ວຽກງານດ້ານການຕະຫຼາດ / Marketing.....
- ວຽກງານດ້ານຍຸດທະສາດອົງກອນ / Organizational Strategy.....
- ວຽກງານດ້ານການເງິນການບັນຊີ / Financial Management.....
- ການດຳເນີນທຸລະກິດ ແລະ ຜົນການດຳເນີນງານປະຈຳປີ 2017 / Business Performance of the Year ending December, 2017.....
- ແຜນການດຳເນີນງານປະຈຳປີ 2018 / Annual Work Plan for the year 2018.....

ສາມຈາກປະທານ ສີທອງ ພົມມະຈິດ ປະທານສະພາບໍລິຫານ



ໂດຍຄວາມພະຍາຍາມຢ່າງຕັ້ງໜ້າ ເພື່ອນຳໜ້າໃນວຽກງານທຸລະກິດການກໍ່ສ້າງ ໃນຂະແໜງຂົວທາງໃນ ສປປ ລາວ, ທ່ານ ສີພອນ ອຸທຸມພອນ ໄດ້ກໍ່ຕັ້ງບໍລິສັດ ພູສີ ຫຼວງ ພະບາງ ກໍ່ສ້າງ ແລະ ສ້ອມແປງຂົວ-ທາງ ຈຳກັດຜູ້ດຽວ ໃນຊຸມປີ 1998 ເພື່ອ ເຄື່ອນ ໄຫວໃນຂົງເຂດວຽກງານພັດທະນາໂຄງລ່າງພື້ນຖານ ແລະ ຄົມມະນາຄົມ ເຊິ່ງຖືວ່າເປັນ ຍຸດທະສາດສຳຄັນໃຫ້ແກ່ວຽກງານການພັດທະນາແຫ່ງຊາດ. ມາເຖິງວັນນີ້ ຂ້າພະເຈົ້າ ມີ ຄວາມພູມໃຈຫຼາຍທີ່ໄດ້ເປັນພາກສ່ວນໜຶ່ງພາຍໃນທີມງານພ້ອມກັບຄວາມຕັ້ງໃຈອັນແຮງ ກ້າເຂົ້າສູ່ການປະຕິບັດໂຄງການກໍ່ສ້າງທີ່ມີຄຸນນະພາບ, ບໍລິການດ້ວຍຄວາມຈິງໃຈ ແລະ ຍຶດຖືຮັດແໜ້ນສາຍພົວພັນທີ່ດີກັບຄູ່ຄ້າ. ໃນສອງທົດສະວັດທີ່ຜ່ານມາ ບໍລິສັດຂອງພວກ ເຮົາໄດ້ຢືນຢັນຄວາມສຳເລັດໃນຖານະຜູ້ສະໜອງ ແລະ ໃຫ້ບໍລິການດ້ານການກໍ່ສ້າງຂົວ-ທາງ ໃນ ສປປ ລາວ.

ໃນປີ 2009 ຂ້າພະເຈົ້າໄດ້ມາເປັນເຈົ້າຂອງ ບໍລິສັດ ພູສີ ຫຼວງພະບາງ ກໍ່ສ້າງ ແລະ ສ້ອມແປງຂົວ-ທາງ ເຊິ່ງຖືໄດ້ວ່າເປັນຜູ້ບໍລິຫານທີ່ໜຸ່ມນ້ອຍໃນຍຸກທີສອງຂອງ ບໍລິສັດ. ເຊິ່ງພາລະ ແລະ ຄວາມຮັບຜິດຊອບດັ່ງກ່າວໄດ້ສົ່ງຜົນໃຫ້ຂ້າພະເຈົ້າຄົ້ນຄິດເພື່ອ ໃຫ້ບໍລິສັດກ້າວໄປຂ້າງໜ້າພາຍໃຕ້ທີມງານທີ່ມີຄຸນນະພາບ ແລະ ປະສົບການ, ໂດຍການ ໝູນໃຊ້ເຄື່ອງມື ແລະ ເຕັກໂນໂລຊີ ແລະ ຮ່ວມມືກັບບໍລິສັດທີ່ເປັນຫຸ້ນສ່ວນຈາກຫຼາຍ ພາກສ່ວນ ສອງປັດໄຈດັ່ງກ່າວໄດ້ກາຍເປັນກຳລັງແຮງເຊິ່ງລູກຄ້າໄດ້ໃຫ້ຄວາມເຊື່ອໝັ້ນ ຢ່າງຕໍ່ເນື່ອງ, ໂດຍຍຸດທະສາດການພັດທະນາໂຄງລ່າງພື້ນຖານຂອງລັດຖະບານໄດ້ເປີດ ໂອກາດໃຫ້ແກ່ການຂະຫຍາຍທຸລະກິດຂອງພວກເຮົາ.

ໃນຄວາມພະຍາຍາມ ແລະ ຄວາມຕັ້ງໃຈຢ່າງແຮງກ້າເພື່ອໃຫ້ກາຍເປັນຕົ້ນ ແບບການສະໜອງການບໍລິການທີ່ດີໃຫ້ແກ່ລູກຄ້າແບບສ້າງສັນ, ຍືນຍົງ ແລະ ຄຸ້ມຄ່າ, ພະນັກງານວິຊາການ PCD ແລະ ຕົວຂ້າພະເຈົ້າເອງແມ່ນມີຄວາມພາກພູມໃຈຕໍ່ພາລະ ບົດບາດຂອງພວກເຮົາທີ່ໄດ້ມີສ່ວນຮ່ວມໃນວຽກງານພັດທະນາໂຄງລ່າງພື້ນຖານ, ເຊິ່ງໄດ້ ເປັນສ່ວນໜຶ່ງນຳມາເຊິ່ງຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າກໍ່ຄືທ່າແຮງໃຫ້ແກ່ ການພັດທະນາເສດຖະກິດສັງຄົມແຫ່ງຊາດ. ດັ່ງນັ້ນ, ພວກເຮົາພ້ອມແລ້ວທີ່ຈະກ້າວໄປ ຂ້າງໜ້າພາຍໃຕ້ຊື່ໃໝ່ໃນນາມ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ເພື່ອຮອງ ຮັບໃຫ້ແກ່ການຂະຫຍາຍທຸລະກິດໃນອະນາຄົດ ແລະ ກາຍເປັນຜູ້ພັດທະນາໂຄງການຢ່າງ ແທ້ຈິງ. ສືບເນື່ອງຈາກເງື່ອນໄຂດັ່ງກ່າວພວກເຮົາມີຄວາມຍິນດີເປັນຢ່າງຍິ່ງທີ່ຈະຮ່ວມມື ແລະ ອຳນວຍຄວາມສະດວກໃຫ້ແກ່ບຸກຄົນ, ນິຕິບຸກຄົນເຂົ້າຮ່ວມລົງທຶນກັບພວກເຮົາເພື່ອ ຍຸດທະສາດພັດທະນາປະເທດໃນອະນາຄົດ.

Message from the Chairman Sithong Phommachith



Driven by his ambition to pioneer the construction engineering business in Lao PDR, Mr. Siphone Outhoumphone founded Phousy Luang Prabang Road and Bridge Construction Sole Co., Ltd. in 1998 to play a part in transportation and infrastructure development, which is essential for national development. Till these days, I am very proud to be part of the team with strong commitment to quality, honest services and good relationship with clients, the company has secured its stance as a foremost provider of construction engineering services in Lao PDR for almost two decades.

In 2009, I became the sole owner of Phousy Luang Prabang Road and Bridge Construction Sole Co., Ltd as the second generation. It is my responsibility to drive the company forward through competent workforce, the use of cutting-edge technologies and a network of business partners. All these together have become the strengths on which our clients have continuously relied. Concomitantly, the government's strategy of steering the country toward developed-nation status through infrastructure development has opened up opportunity for our business expansion.

In the effort to become a model of excellence by providing our clients with innovative, sustainable and cost-effective solutions, PCD's people and I feel the same sense of pride of our roles in national infrastructure

ຄວາມເປັນມາຂອງ PCD ໂດຍຫຍໍ້
PCD at a Glance



ຄວາມເປັນມາທີ່ດີໃນວຽກງານການສຳຫຼວດ-ອອກແບບຂົວທາງ ແລະ ການລົງທຶນແບບ EPC (ຜູ້ຮັບເໝົາອອກແບບ ດ້ານວິສະວະກຳ, ການຈັດຊື້-ຈັດຈ້າງ ແລະ ກໍ່ສ້າງ) ເຊິ່ງໄດ້ຮັບຜົນສຳເລັດໃນຫຼາຍໆໂຄງການ ລວມທັງໂຄງການ ສ້ອມແປງ ແລະ ບູລະນະລະບົບຕາໜ່າງເສັ້ນທາງພື້ນຖານໂຄງລ່າງຂອງລັດຖະບານ, ໃນໄລຍະຜ່ານມາໂດຍຮູບແບບ ການລົງທຶນ EPC ພາຍໃຕ້ການນຳຂອງທ່ານ ສີທອງ ພົມມະຈິດ ປະທານ PCD ເປັນຜູ້ໜຶ່ງທີ່ມີວິໄສທັດ ແລະ ຈິນຕະນາການອັນກວ້າງໄກ, ບໍລິສັດ PCD ໄດ້ຮັກສາຈັງຫວະການເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ມີ ລັກສະນະໜັກແໜ້ນໝັ້ນຄົງ ແລະ ໄດ້ກາຍເປັນໜຶ່ງໃນບໍລິສັດໃນຂົງເຂດວຽກງານດັ່ງກ່າວໃນເຂດພາກເໜືອຂອງ ສປປ ລາວ.

ໃນທີ່ສຸດບໍລິສັດໄດ້ຜ່ານຂະບວນການກວດສອບ ແລະ ຢັ້ງຢືນຈາກຫຼາຍພາກສ່ວນ ແລະ ໄດ້ຖືກຮັບຮອງເຂົ້າ ຈົດທະບຽນເປັນບໍລິສັດມະຫາຊົນ. ໃນວັນທີ 11 ພະຈິກ 2016 ທີ່ຜ່ານມາພາຍໃຕ້ຊື່ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ (PCD) ໂດຍມີທຶນຈົດທະບຽນ 700 ຕື້ກີບ ແລະ ມີທ່າແຮງທີ່ຂະຫຍາຍຕົວໃນອະນາຄົດ.

Established in 1998, Phousy Luang Prabang Road and Bridge Construction Sole Co., Ltd, has a great track record of Design and EPC (Engineering, Procurement and Construction) achievements in numerous government of materials for engineering works, to construction.

Under the brilliant leadership of the visionary Chairman Mr. Sithong Phommachith, the company has enjoyed exponential growth which made it a leading construction engineering service provider based in the northern part of Lao PDR. On 11 November 2016, it was registered as a public company under the name Phousy Construction and Development (PCD), With registered capital of 700 billion Lao kip, which will enable its future service expansion. PCD will also strive to be a project developer.

1997 — 2009 — 11 Nov 2016

ວິໄສທັດ : ບໍລິສັດຕັ້ງເປົ້າໝາຍຈະກ້າວຂຶ້ນມາເປັນຜູ້ນຳທາງດ້ານການກໍ່ສ້າງ, ເຕັກໂນໂລຊີ ແລະ ການພັດທະນາ ພາຍໃນປະເທດ ແລະ ຈະຂະຫຍາຍທຸລະກິດໄປເຖິງຂົງເຂດປະຊາຄົມອາຊຽນໃນອະນາຄົດ.

ພາລະກິດ : ບໍລິສັດຕັ້ງໃຈຢ່າງຍິ່ງຈະສະໜອງການບໍລິການໃຫ້ແກ່ລູກຄ້າ ໃນລະດັບສາກົນຢ່າງຮອບດ້ານເຊັ່ນ: ຄຸນນະພາບ, ທັນກັບເວລາ, ເອົາໃຈໃສ່ໃນລາຍລະອຽດ ແລະ ຊື່ສັດ ເປັນທຳ ຕໍ່ຄູ່ຮ່ວມງານ ແລະ ລູກຄ້າ.

ຄຸນຄ່າທີ່ພວກເຮົາຍຶດຖື: **P**: ປະຕິບັດວຽກຢ່າງມີປະສິດທິພາບ

C: ຮັດແໜ້ນສາຍສຳພັນກັບຄູ່ຄ້າເປັນບູລິມະສິດອັນດັບໜຶ່ງ

D: ວຽກສຳເລັດຕາມກຳນົດເວລາ ແລະ ຮັບປະກັນຄຸນນະພາບ

Vision:

Phousy construction and development strive to pioneer the construction, technology and development in Lao PDR and expended our business to ASEAN countries.

Mission:

Our mission is to provide the best services with international standards in all areas such as high quality, timely delivery, Attention to details, honesty and fairness to our partners and customers.

Values:

P: Performance that is unrivalled

C: Comprehensive customer relations as the top priority

D: Delivery of on-time high quality work.

ສະພາບໍລິຫານ ຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ / Board of Directors



ທ່ານ ສີທອງ ພົມມະຈິດ
ປະທານສະພາບໍລິຫານ
Mr. Sithong PHOMMACHITH
Chairman



ທ່ານ ຂັນທະວົງ ດາລາວົງ
ຮອງປະທານສະພາບໍລິຫານ / ສະມາຊິກອິດສະຫຼະ
Mr. Khanthavong DALAVONG
Vice Chairman / Independent Member



ທ່ານ ນາງ ພິໄລພອນ ວົງປະເສີດ
ສະມາຊິກສະພາບໍລິຫານ / ຜູ້ອຳນວຍການໃຫຍ່
Ms. Philaiphone VONGPRASEUTH



ທ່ານ ສິທາ ພົມມະຈິດ
ສະມາຊິກສະພາບໍລິຫານ
Mr. Sitha PHOMMACHITH
Member



ທ່ານ ນັນທະລັດ ທິລະກຸນ
ສະມາຊິກອິດສະຫຼະ
Mr. Nanthalath THILAKUN
Member / Independent Member

ຄະນະຜູ້ອຳນວຍການໃຫຍ່

Managing Directors of PCD



ທ່ານ ນາງ ພິໄລພອນ ວົງປະເສີດ
ຜູ້ອຳນວຍການໃຫຍ່
Ms. Philaiphone VONGPRASEUTH
Chief Executive Officer



ທ່ານ ອຳໄພວັນ ຈັນທະພາລີ
ຜູ້ຊ່ວຍຜູ້ອຳນວຍການໃຫຍ່ຝ່າຍປະຕິບັດການ
Mr. Amphaivanh CHANHTHAPHALY
Chief Operations Officer



ທ່ານ ອາໂນໄລ ສີທາຣາດ
ຜູ້ຊ່ວຍຜູ້ອຳນວຍການໃຫຍ່ຝ່າຍການເງິນ
Mr. Anolay SIHARATH
Chief Financial Officer



ທ່ານ ດວງ ປະທຸມລັກ
ພະແນກ ຈັດຕັ້ງ ບໍລິຫານ
Mr. Duang PATHOUMLACK
Head of HR and Administration Department



ທ່ານ ພຸດທະເສນ ພົມມີໄຊ
ພະແນກ ພັດທະນາທຸລະກິດ ແລະ ການຕະຫຼາດ
Mr. Phoutthasen PHOMMIXAY
Head of Business Development and Marketing Department



ທ່ານ ວິລະຄົມ ພິລາກຸນ
ພະແນກ ອອກແບບ ແລະ ສຳຫລວດ
Mr. Vilakhom PHILAKOUN
Head of Design and Survey Department



ທ່ານ ເກດສະໜາ ຈັນທະວົງ
ພະແນກ ກໍ່ສ້າງ ເຕັກນິກ
Mr. Kethsana CHANHTHAVONG
Head of Construction and Monitoring Deparment



ທ່ານ ນາງ ໄຮທອງ ພົມມະຈິດ
ພະແນກ ການບັນຊີ ການເງິນ
Mrs. Haithong PHOMMACHITH
Head of Finance and Accounting Deparment



ທ່ານ ບຸນທິດ ທອງສັກດີ
ພະແນກ ພະແນກສາງ
Mr. Bounthod THONGSACKDY
Head of Inventory Department



ທ່ານ ຄອນສະຫວັນ ທຳວົງສິດ
ພະແນກ ຈັດຊື້ຈັດຈ້າງ
Mr. Khonesavanh THAMVONGSITH
Head of Procurement Department

ໂຄງການທີ່ພົ້ນເດັ່ນ / Highlight Projects

ເຮັດວຽກຮ່ວມກັບລູກຄ້າ, ຜູ້ຊ່ຽວຊານ ແລະ ບັນດາຄູ່ຮ່ວມ, ພວກເຮົາໄດ້ຂະຫຍາຍຕົວເປັນກຸ່ມທີ່ເຂັ້ມແຂງ ໃນການກໍ່ສ້າງຖະໜົນ ຫົນທາງ ແລະ ຂົວ ໄດ້ຮັບທຶນຈາກລັດຖະບານ ໃນການບຳລຸງຮັກສາເສັ້ນທາງ, ໂດຍສະເພາະໃນພາກເໜືອ ຂອງ ສປປ ລາວ ເກືອບ 20 ປີ ຂອງການດຳເນີນງານ, ຜົນສຳເລັດຂອງພວກເຮົາໄດ້ອຳນວຍຄວາມສະດວກໃຫ້ ປະຊາຊົນໃນການເດີນທາງມີຄວາມສະດວກຫຼາຍກວ່າເກົ່າ ແລະ ຄວາມປອດໄພ.

Working collaboratively with clients, specialists and partners, we have grown a strong portfolio in state-funded projects for road and bridge construction and maintenance, particularly in northern Lao PDR. Almost 20 years of operation, our achievements have allowed people to travel with greater convenience and safety.







ກໍ່ສ້າງທາງ
Road Construction



	ເຈົ້າຂອງໂຄງການ/ຄູ່ສັນຍາ Project Owner/Contracting Party	ໄລຍະເວລາ Duration
ໂຄງການ ກໍ່ສ້າງທາງເລັ່ຽງເມືອງຫຼວງພະບາງ ພ້ອມຂົວຂ້າມ 1 ແຫ່ງ Construction of a bypass along with a concrete bridge in Luang Prabang City	ພະແນກ ຄມຂ ປະຈຳແຂວງ ຫຼວງພະບາງ PWT Division, Luang Prabang Province	2009-2012
ໂຄງການກໍ່ສ້າງທາງຕາມຊາຍແດນລາວ - ຫວຽດນາມ - ກຳປູເຈ ແຂວງ ອັດຕະປື Construction of road along the borders of Lao PDR, Vietnam and Cambodia, Attapeu Province	ກົມຂົນສົ່ງ Department of Transport	2014-2019
ສຳຫຼວດ-ອອກແບບ ເບື້ອກໍ່ສ້າງທາງ ຕາດກວາງຊີ ຍາວ 24 ກິໂລແມັດ ແຂວງ ຫຼວງພະບາງ Survey-design of Tad Kaung Xi waterfall road, 24 kilometers in length, Luang Prabang Province	ພະແນກ ຄມຂ ປະຈຳແຂວງ ຫຼວງພະບາງ PWT Division, Luang Prabang Province	2016-2018
ກໍ່ສ້າງທາງ ຍາວ 118 ກິໂລແມັດ ແຂວງ ບໍ່ແກ້ວ 118-kilometers road construction in Bokeo Province	ພະແນກ ຄມຂ ປະຈຳແຂວງບໍ່ແກ້ວ PWT Division, Bokeo Province	Planning for 2017-2021
ເສັ້ນທາງໃນເຂດເສດຖະກິດພິເສດ ແຂວງ ຫຼວງພະບາງ Roads in the Special Economic Zone, Luang Prabang Province	ສະພາເຂດເສດຖະກິດພິເສດ Chamber of Special Economic Zone	Planning for 2017-2021
ສຳຫຼວດ-ອອກແບບເບື້ອ ກໍ່ສ້າງທາງ 4 ເລນໃນຕົວເມືອງຫ້ວຍຊາຍ ຍາວ 6.1 ກິໂລແມັດ ແຂວງ ບໍ່ແກ້ວ Survey-design for four-lane road construction in urban Huay Sai Kao District, 6.1 kilometers in length, Bokeo Province	ພະແນກ ຄມຂ ປະຈຳແຂວງບໍ່ແກ້ວ PWT Division, Bokeo Province	Planning for 2017-2021
ສຳຫຼວດ-ອອກແບບ ທາງເລັ່ຽງເມືອງ ຜ່ ບ້ານທາດຢ່ວນ ເມືອງຫຼວງພະບາງ, ແຂວງ ຫຼວງພະບາງ Survey-design of urban bypass to Thathieng Village, Luang Prabang District, Luang Prabang Province	ພະແນກ ຄມຂ ປະຈຳແຂວງ ຫຼວງພະບາງ PWT Division, Luang Prabang Province	Planning for 2017-2021

ສຳເລັດ Accomplished | ຢູ່ໃນໄລຍະກໍ່ສ້າງ Under Construction | ຢູ່ໃນຂັ້ນຕອນການສຳຫຼວດອອກແບບ ແລະ ກະກຽມປະມູນ Under Survey and Bidding Phase

ບຳລຸງຮັກສາທາງ
Road Maintenance



	ເຈົ້າຂອງໂຄງການ/ຜູ້ລົງນາ Project Owner/Contracting Party	ໄລຍະເວລາ Duration
ໂຄງການວຽກສ້ອມແປງທາງ ແບບສຸກເສີນ ແລະ ຟື້ນຟູຄືນ ແກ່ບ້ານ ປາກມອງ - ຊາຍແດນ ແຂວງ ອຸດົມໄຊ Project for emergency repair and rehabilitation of the road from Pakmong Village to the border, Oudomxay Province	ພະແນກ ໂຍທາ ປະຈຳແຂວງ ຫຼວງພະບາງ PWT Division, Luang Prabang Province	2012-2013
ໂຄງການແກ້ໄຂ ແບບສຸກເສີນ ແກ່ບ້ານ ຊຽງແມນຫາ ຊາຍແດນ ເມືອງ ຫົງສາ ແຂວງ ຫຼວງພະບາງ Emergency handling project for road from Xiengman to borders in Hongsa District, Luang Prabang Province	ພະແນກ ໂຍທາ ປະຈຳແຂວງ ຫຼວງພະບາງ PWT Division, Luang Prabang Province	2012-2013
ໂຄງການ ແກ້ຊຸກເສີນເສັ້ນທາງທີ່ຖືກພົ້ນກະທົບຈາກໄພພິບັດເມືອງ ໄພນໄຊ, ແຂວງ ຫຼວງພະບາງ Project for emergency repair of roads affected by a disaster in Phonexay District, Luang Prabang Province	ພະແນກ ໂຍທາ ປະຈຳແຂວງ ຫຼວງພະບາງ PWT Division, Luang Prabang Province	2013
ໂຄງການແກ້ໄຂຊຸກເສີນດ້ວຍກົນຈັກ ເມືອງ ໄພນໄຊ, ແຂວງ ຫຼວງພະບາງ Project for emergency handling by machinery in Phonexay District, Luang Prabang Province	ພະແນກ ໂຍທາ ປະຈຳແຂວງ ຫຼວງພະບາງ PWT Division, Luang Prabang Province	2013
ໂຄງການແກ້ໄຂຊຸກເສີນເມືອງນ້ຳບາກ, ແຂວງ ຫຼວງພະບາງ Emergency handling project in Nam Bak District, Luang Prabang Province	ພະແນກ ໂຍທາ ປະຈຳແຂວງ ຫຼວງພະບາງ PWT Division, Luang Prabang Province	2013
ໂຄງການແກ້ໄຂຊຸກເສີນເສັ້ນທາງທີ່ຖືກພົ້ນກະທົບ ເມືອງ ຈອມເພັດ, ແຂວງ ຫຼວງພະບາງ Project for emergency handling for damaged roads in Chom Phet District, Luang Prabang Province	ພະແນກ ໂຍທາ ປະຈຳແຂວງ ຫຼວງພະບາງ PWT Division, Luang Prabang Province	2013
ໂຄງການວຽກສ້ອມແປງທາງ ແບບສຸກເສີນ ແລະ ຟື້ນຟູ, ແກ້ໄຂຈຸດບັ້ງໄຟຊຸດຫຼັກ 4 ຫາ ບ້ານສີບຸນເຮືອງ ແຂວງ ຫຼວງພະບາງ Project for emergency repair and rehabilitation of road from KM4 Radio Station to Sibounheung Village, Luang Prabang Province	ພະແນກ ໂຍທາ ປະຈຳແຂວງ ຫຼວງພະບາງ PWT Division, Luang Prabang Province	2014-2015
ໂຄງການສ້ອມແປງທາງ ແບບສຸກເສີນ ແລະ ຟື້ນຟູຄືນແກ່ບ້ານ ພູທິດເຜິ້ງ ຫາ ຊາຍແດນຫວຽດນາມ ແຂວງ ຫຼວງພະບາງ Project for emergency repair and rehabilitation of road from Phutidpheung Village to Vietnam border, Luang Prabang Province	ພະແນກ ໂຍທາ ປະຈຳແຂວງ ຫຼວງພະບາງ PWT Division, Luang Prabang Province	2012-2014
ໂຄງການສ້ອມແປງເສັ້ນທາງ ສຸກເສີນ ແລະ ຟື້ນຟູຫຼັງລະດູຝົນ ເມືອງ ໂພນທອງ ແຂວງ ຫຼວງພະບາງ Project for emergency road repair and rehabilitation after the rainy season, Phonethong District, Luang Prabang Province	ພະແນກ ໂຍທາ ປະຈຳແຂວງ ຫຼວງພະບາງ PWT Division, Luang Prabang Province	2016

ສຳເລັດ Accomplished | ກຳລັງກໍ່ສ້າງ Under Construction | ກຳລັງຢູ່ໃນຂັ້ນຕອນການສຳຫຼວດອອກແບບ ແລະ ກະກຽມປະມູນ Under Survey and Bidding Phase

ปับปุงทาๆ
Road Improvement



	ເຈົ້າຂອງໂຄງການ/ຄູ່ສັນຍາ Project Owner/Contracting Party	ໄລຍະເວລາ Duration
ໂຄງການຍົກລະດັບເສັ້ນທາງ ເມືອງ ໂພນໃຊ ແຂວງ ຫຼວງພະບາງ Project for road upgrade in Phonexay District, Luang Prabang Province	ພະແນກ ຍທຂ ປະຈຳແຂວງ ຫຼວງພະບາງ PWT Division, Luang Prabang Province	2009-2011
ໂຄງການກໍ່ສ້າງທາງປູຢາງລະດັບ2ຊັ້ນ ໃນເຂດຂະຫຍາຍເມືອງຫຼວງພະບາງ Asphalt paving level-2 project in urban Luang Prabang City	ພະແນກ ຍທຂ ປະຈຳແຂວງ ຫຼວງພະບາງ PWT Division, Luang Prabang Province	2009-2010
ໂຄງການກໍ່ສ້າງຍົກລະດັບເສັ້ນທາງເລກທີ 3503 ເມືອງໂພນທອງ ແຂວງ ຫຼວງພະບາງ Project for the upgrade of road number 3503 in Phonethong District, Luang Prabang Province	ພະແນກ ຍທຂ ປະຈຳແຂວງ ຫຼວງພະບາງ PWT Division, Luang Prabang Province	2009-2011
ໂຄງການກໍ່ສ້າງທາງ ປູຢາງ 2 ຊັ້ນ ຕອບທາງແຕ່ບ້ານ ອູ ຫາ ບ້ານ ສີບຸນເຮືອງ ແຂວງ ຫຼວງພະບາງ Asphalt paving level-2 project from Ou Village to Sibounheung Village, Luang Prabang Province	ພະແນກ ຍທຂ ປະຈຳແຂວງ ຫຼວງພະບາງ PWT Division, Luang Prabang Province	2015-2018
ໂຄງການທາງຍົກລະດັບ, ບ້ານກີ່ວເຈຍ, ເມືອງເຮີບ, ແຂວງຫຼວງພະບາງ Road upgrade, Kiewjia Village, Heub District, Luang Prabang Province	ພະແນກ ຍທຂ ປະຈຳແຂວງ ຫຼວງພະບາງ PWT Division, Luang Prabang Province	2015-2018

ສຳເລັດ
Accomplished

ຢູ່ໃນໄລຍະກໍ່ສ້າງ
Under Construction

ຢູ່ໃນຂັ້ນຕອນການສຳຫລວດແລະກະກຽມປະມູນ
Under Survey and Bidding Phase







ການພັດທະນາສັງຄົມ
Caring for Society

ຄຽງຄູ່ການຂະຫຍາຍຕົວທາງທຸລະກິດ ພວກເຮົາຍັງໃຫ້ຄວາມສຳຄັນໃນການພັດທະນາແບບຍືນຍົງແກ່ສັງຄົມ ແລະ ສິ່ງແວດລ້ອມ. PCD ຈຶ່ງພັດທະນາຍຸດທະສາດ CSR ຕໍ່ສັງຄົມແບບຍືນຍົງ ແລະ ມີປະສິດທິພາບ ແລະ ເປັນ ແບບຢ່າງຕະຫຼອດມາ, ບໍລິສັດໄດ້ມີສ່ວນຮ່ວມໃນກິດຈະກຳຫຼາຍຢ່າງທີ່ສຳຄັນເປັນແບບສ່ວນຕົວ ຫຼື ສະໜັບສະ ໜູນວຽກງານການກຸສົນຂອງລັດຖະບານ.

ໂຄງການ CSR ທີ່ຜ່ານ/ກິດຈະກຳ

- ການບໍລິຈາກຊ່ວຍໂຮງຮຽນປະຖົມທີ່ ເມືອງ ເຝືອງ ແຂວງ ວຽງຈັນ 2016.
- ການບໍລິຈາກຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ ແຂວງ ຫຼວງພະບາງ 2016.
- ການບໍລິຈາກຊ່ວຍບູລະນະບູຮານສະຖານທີ່ ແຂວງ ໄຊຍະບູລີ 2015.

Alongside business growth, we prioritize social and environmental sustainability. PCD thus develops a sustainable and well-round CSR strategy with a passion for being a role model of good corporate citizens. The company has involved in many activities for social benefits both independently and in support of government's charitable work.

Notable CSR project/activities

- Donation to build Primary School in Fueang District, Vientiane Province 2016.
- Donation to help flood victim in Luangprabang Province 2016.
- Donation for restoring historic temple in Xayaboury Province 2015.



ການດຳເນີນວຽກງານດ້ານບຸກຄະລາກອນໃນຕົ້ນປີ 2017 ແມ່ນໄດ້ເນັ້ນໜັກການຝຶກອົບຮົມ, ປັບປຸງໂຄງຮ່າງ ການຈັດຕັ້ງຂອງອົງກອນຈາກການເປັນບໍລິສັດຈຳກັດ ມາເປັນ ບໍລິສັດມະຫາຊົນ ເພື່ອໃຫ້ສອດຄ່ອງຕາມໂຄງສ້າງ ແລະ ເງື່ອນໄຂຂອງຕະຫຼາດຫຼັກຊັບລາວ.


ດ້ານສະຫວັດດີການສັງຄົມ, ການດູແລຊີວິດການເປັນຢູ່ຂອງພະນັກງານພາຍໃນອົງກອນໃຫ້ດີຂຶ້ນ ບໍລິສັດໄດ້ເຮັດ ການສຳຫຼວດເພື່ອກະກຽມສະໜອງປະກັນສັງຄົມໃຫ້ແກ່ພະນັກງານທຸກຄົນ, ມີການກວດສຸຂະພາບປະຈຳປີ, ເຮັດ ວຽກຕາມວັນເວລາ ແລະ ມີມື້ລາພັກປະຈຳປີຕາມກົດໝາຍແຮງງານລາວວາງອອກ.

In regard to the human resources management aspect, in early 2017 PCD has been focusing on capacity development, and organizational re-structuring when the company transformed from Sole Company Limited to Public Company in order to adjust in accordance to the Lao Stock Exchange ‘s policies and regulations.


On social and wellbeing aspects, PCD has been placing emphasis on the living quality of staffs by organizing survey and requirements on social insurance and wellbeing aspect so that staffs can rest assure that they and their families are being taken care off including annual health check, working hours and holidays in accordance to the Lao Labour Law.

- ຈຳນວນພະນັກງານທັງໝົດຮອດວັນທີ: 31/12/2017 ມີຈຳນວນ 178 ຄົນ.
- ປະກາດຮັບພະນັກງານໃໝ່ຈຳນວນ 5 ຄົນ ເພື່ອເພີ່ມຂີດຄວາມສາມາດ ແລະ ປະສົດທິຜົນໃນການດຳເນີນ ທຸລະກິດ.
- ການລາອອກ 0 ຄົນ.
- ຖືກປົດອອກ 0 ຄົນ.
- ຖືກເລື່ອນຕຳແໜ່ງ 7 ຄົນ.





- Total number of staff as off 31/12/2017: 178 staffs.
- Vacancy announcement for five more positions in order to enhance our team capacity And Efficiency of doing business.
- Staff turn-over: 0.
- Staff released off duty: 0.
- Staff Promotion: 7 staffs.



➢ **ເງິນເດືອນ ແລະ ສະຫວັດດີການ**

- ອັດຕາການເພີ່ມຂຶ້ນຂອງເງິນເດືອນ 2%.
- ຊຸກຍູ້ພະນັກງານເກີດລູກ 9.000.000 ກີບ.
- ຊ່ວຍເຫຼືອກົນທານນໍາຍາດສາຍຕົ້ງພະນັກງານເສຍຊີວິດ: 10.000.000 ກີບ.

➢ **Remuneration and Social Welfare**

- Salary increase of 2017: 2%.
- Extra support for staff on maternity leave: 9.000.000 Kip.
- Assistance provided to the lost staff's family member: 10.000.000 Kip

➢ **ຈັດກິດຈະກໍາສ້າງຄວາມສາມັກຄີໃນໝູ່ພະນັກງານ**

- ຈັດກິດຈະກໍາກິລາ (ເຕະບານ, ເປຕັ້ງ) 3 ຄັ້ງ.
- ຈັດງານລ້ຽງໃນເທດສະການຕ່າງໆ (ປີໃໝ່ສາກົນ, ວັນແມ່ຍິງ, ປີໃໝ່ລາວ ແລະ ວັນກໍາມະກອນ...).

➢ **Organize activities for unity of staffs**

- Sport activities (football, baton) 3 times.
- Organize company events (New Year parties, Women's day, Lao New Year and Labour Day and so on).

➢ **ການເສີມສ້າງຄວາມອາດສາມາດໃຫ້ແກ່ພະນັກງານ**

- ຈັດສົ່ງພະນັກງານໄປຮ່ວມການຝຶກອົບຮົມ ແລະ ຖອດຖອນບົດຮຽນກັບອົງກອນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ເພື່ອມາພັດທະນາອົງກອນໃຫ້ມີຄວາມກ້າວໜ້າ, ທັນສະໄໝ ພ້ອມທີ່ຈະຮັບໃຊ້ສັງຄົມ.

➢ **Capacity building for staff**

- Encourage staff to attend various training and field studies in order to enhance their knowledge and experience sharing both domestic and international learning events so that the company can advance, modernized and ready to serve.

ວຽກງານດ້ານການຕະຫຼາດ / Marketing

ເນື່ອງຈາກບໍລິສັດເປັນຜູ້ໃຫ້ບໍລິການວຽກງານວິສະວະກຳກໍ່ສ້າງແບບຄົບວົງຈອນ ໂດຍເນັ້ນການໃຫ້ບໍລິການໃນສ່ວນວຽກງານພື້ນຖານໂຄງລ່າງ ເຊິ່ງສ່ວນໃຫຍ່ເຈົ້າຂອງໂຄງການຈະເປັນໜ່ວຍງານພາກລັດ. ດັ່ງນັ້ນ, ການເຮັດການຕະຫຼາດຂອງບໍລິສັດຈະເນັ້ນໄປຍັງກຸ່ມເປົ້າໝາຍໜ່ວຍງານພາກລັດ ແລະ ເອກະຊົນ ໂດຍເນັ້ນການສົ່ງມອບໂຄງການທີ່ມີຄຸນນະພາບ ທັນກັບເວລາ ເຊິ່ງເປັນປັດໄຈຫຼັກທີ່ຈະເຮັດໃຫ້ເຈົ້າຂອງໂຄງການມີຄວາມເຊື່ອໝັ້ນໃນຄຸນນະພາບຂອງໂຄງການທີ່ບໍລິສັດເປັນຜູ້ກໍ່ສ້າງ ລວມເຖິງເປັນການສ້າງໂອກາດໃຫ້ບໍລິສັດໄດ້ຮັບວຽກເພີ່ມຂຶ້ນຈາກໜ່ວຍງານພາກລັດດັ່ງກ່າວ. ນອກຈາກນີ້, ບໍລິສັດຍັງຕ້ອງສ້າງຄວາມສຳພັນອັນດີກັບໜ່ວຍງານພາກລັດ ໃນການໃຫ້ຂໍ້ມູນ ແລະ ແລກປ່ຽນຂໍ້ມູນທາງດ້ານວິຊາການທີ່ກ່ຽວກັບການກໍ່ສ້າງ ລວມເຖິງການສຶກສາ ຊອກຄົ້ນພື້ນທີ່ ເພື່ອພັດທະນາໂຄງການກໍ່ສ້າງເສັ້ນທາງເພີ່ມອີກ ອັນເປັນການເຮັດການຕະຫຼາດ ເຊິ່ງສິ່ງຜົນໃຫ້ບໍລິສັດມີໂອກາດອັນດີທີ່ຈະໄດ້ວຽກປະມູນໃນໂຄງການຕ່າງໆ ເພີ່ມຂຶ້ນອີກດ້ວຍ.

ປະຈຸບັນ ບໍລິສັດຂອງພວກເຮົາກຳລັງປະມູນໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ປາກເຊ ເຊິ່ງມີມູນຄ່າປະມານ 4 ຕື້ກວ່າໂດລາສະຫະລັດ ແລະ ບໍລິສັດພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ກໍ່ແມ່ນໜຶ່ງໃນ 4 ບໍລິສັດທີ່ໄດ້ຮັບການຄັດເລືອກເຂົ້າຮອບສຸດທ້າຍ, ນອກນັ້ນພວກເຮົາກຳລັງດຳເນີນໂຄງການອະສັງຫາລິມະຊັບ ໂດຍການກໍ່ສ້າງໂຮງແຮມລະດັບ 4-5 ດາວທີ່ນະຄອນຫຼວງວຽງຈັນ ແລະ ຫຼວງພະບາງ. ກະກຽມສະເໜີລາຄາສຳລັບໂຄງການໃຫຍ່ໆຂອງ ADB ແລະ WB ອີກຫຼາຍໂຄງການ.

As a service provider of comprehensive engineering by emphasizing on infrastructure developments services which the majority of the project owners are the government sector. Therefore, our marketing strategy focus on the government sector by transferring the projects on a quality and on-time basis which is an important factor for the project owner that will trust on a quality provided by the Company which create an opportunity to get more jobs in the future. In addition, the Company has built good relationship with the government sector by provide and exchange the construction information along with the studies, exploration of addition areas for road project developments which creates a better chance of winning the bidding.

Currently, PCD is one of the top four finalists whose submitted bidding document for the Southern Highway Road project with an approximated project value of 4 billion US Dollars. Apart from bidding for this highway road project, PCD is working on our real estate portfolio by aiming to building a 4-5 stars hotel in both Vientiane Capital and Luang Prabang Province. PCD is already being alert on bidding for ADB and WB infrastructure development projects.

- **ລັກສະນະກຸ່ມລູກຄ້າເປົ້າໝາຍ / Characteristics of Target Customers**

ກຸ່ມລູກຄ້າເປົ້າໝາຍຂອງບໍລິສັດສາມາດແບ່ງໄດ້ເປັນລູກຄ້າຈາກພາກລັດ ແລະ ພາກເອກະຊົນ ໂດຍສະເພາະແມ່ນການກໍ່ສ້າງພື້ນຖານໂຄງລ່າງທີ່ຢູ່ໃນເຂດພາກເໜືອຂອງປະເທດເປັນສ່ວນໃຫຍ່ ແລະ ຂະຫຍາຍໄປຍັງແຂວງ ອື່ນໆ ຫຼື ໃນຂອບເຂດທົ່ວປະເທດ. ແຜນການຕະຫຼາດແມ່ນເນັ້ນໜັກໃສ່ພາກເອກະຊົນ ແລະ ຂະແໜງການພັດທະນາໃນການກໍ່ສ້າງໂຄງການຂະໜາດນ້ອຍ, ກາງ ແລະ ໃຫຍ່ ຕາມລຳດັບ.

Our target customers are divided into the government and private sectors especially on the infrastructure development projects in the northern part of the country covering the whole country. In the future, the Company plans to add extra projects (micro, medium, and mega sizes) from the private sectors and the Company plans to develop properties project to supply the increasing demands of major urban cities of the country.

- **ການຊອກຫາໂຄງການ / Project Bidding**

ຊ່ອງທາງການຈັດຈຳໜ່າຍຂອງບໍລິສັດແມ່ນໄດ້ມີການຮັບວຽກກໍ່ສ້າງຈາກພາກລັດໂດຍກົງ ທັງໂດຍການຍື່ນຊອງປະມູນເພື່ອສະເໜີລາຄາ ແລະ ການເຈລະຈາຕໍ່ລອງວຽກທີ່ຕ້ອງຕົກລົງກັບເຈົ້າຂອງໂຄງການ ໂດຍບໍລິສັດຈະໄດ້ຮັບຊອງປະມູນໂຄງການ ເພື່ອນຳມາປະມວນສະເໜີລາຄາຕາມຂໍ້ກຳນົດ ໃນບາງຄັ້ງບໍລິສັດໄດ້ສະເໜີໂຄງການໄປຍັງເຈົ້າຂອງໂຄງການໂດຍກົງ ເພື່ອພິຈາລະນາອະນຸມັດໂຄງການກໍ່ສ້າງເສັ້ນທາງດັ່ງກ່າວ. ແຕ່ທັງນັ້ນ, ທາງເຈົ້າຂອງໂຄງການ ຕ້ອງເຂົ້າມາກວດສອບຄວາມເປັນໄປໄດ້ຂອງການກໍ່ສ້າງເສັ້ນທາງ ຫຼື ໂຄງການດັ່ງກ່າວ ເພື່ອສຶກສາຄວາມເປັນໄປໄດ້ໃນໂຄງການນັ້ນໆ ເພື່ອເປັນການຫຼຸດຄວາມສ່ຽງຈາກການແຂ່ງຂັນໃນການປະມູນໂຄງການ.

The distribution channel of the Company is getting contracts from the government by submitting the bidding documents to quote the prices and negotiate the works with the project owner. The Company then receives the project bidding documents to evaluate the quotation. From time to time, the Company propose the project directly to the project owner to get an approval of the project. However, the project owner shall inspect the possibility of that road construction or project; the feasibility study is needed to mitigate the competition risk in the bidding.

- **ກົນລະຍຸດການແຂ່ງຂັນ / Competitive Strategy**

ບໍລິສັດມີນະໂຍບາຍທີ່ຈະເພີ່ມວຽກງານກໍ່ສ້າງໃຫ້ຫຼາຍເພີ່ມຂຶ້ນ ທັ້ງໃນຮູບແບບຂອງໂຄງການທາງພາກລັດ ແລະ ເອກະຊົນ ເພື່ອເຮັດໃຫ້ບັນລຸເປົ້າໝາຍຫຼັກຂອງບໍລິສັດ ເປັນບໍລິສັດຜູ້ນຳທາງດ້ານການກໍ່ສ້າງ ແລະ ພັດທະນາພາຍໃນປະເທດ ແລະ ຈະຂະຫຍາຍທຸລະກິດໄປເຖິງຂົງເຂດປະຊາຄົມອາຊຽນ. ບໍລິສັດໄດ້ພັດທະນາກົນລະຍຸດຂອງການແຂ່ງຂັນເອົາໄວ້ດັ່ງຕໍ່ໄປນີ້ ເຊິ່ງຊ່ວຍໃຫ້ເກີດປະໂຫຍດໃນດ້ານການແຂ່ງຂັນ ແລະ ເພື່ອບັນລຸເປົ້າໝາຍຂອງບໍລິສັດ.

The Company has a policy to increase the work in construction from the government and private sectors. To achieve our target to be a leader in construction and country's development, the Company has planned to expand the business in the ASEAN Community. In order to have a competitive advantage and achieve the target, the Company has developed competitive strategies as followed:

ກ. ບໍລິສັດຮັບເໝົາກໍ່ສ້າງແບບຄົບວົງຈອນ / Comprehensive construction service company:

ບໍລິສັດເປັນບໍລິສັດຮັບເໝົາກໍ່ສ້າງແບບຄົງວົງຈອນ ແລະ ມີຄວາມພ້ອມໃນການສະເໜີໂຄງການ ຫຼື ມີຄວາມພ້ອມໃນການເຂົ້າປະມູນໂຄງການທັງຂອງໂຄງການພາກລັດ ແລະ ພາກເອກະຊົນ ເຮັດໃຫ້ສິ່ງຜົນດີຕໍ່ຜົນປະກອບການ ຈະເຮັດໃຫ້ບໍລິສັດສາມາດເຂົ້າເປັນສ່ວນໜຶ່ງໃນຜູ້ນຳດ້ານອຸດສາຫະກຳການກໍ່ສ້າງຊັ້ນນຳຂອງປະເທດ ເລືອກລົງທຶນໃນອຸດສາຫະກຳພື້ນຖານໂຄງລ່າງເປັນຫຼັກ ແລະ ໂຄງການອະສັງຫາລິມະຊັບ ແນໃສ່ຄວາມຮູ້ ຄວາມຊ່ຽວຊານດ້ານເຕັກນິກການກໍ່ສ້າງຂອງບຸກຄະລາກອນ, ການນຳໃຊ້ເຕັກໂນໂລຊີການກໍ່ສ້າງທີ່ທັນສະໄໝ ແນໃສ່ການແຂ່ງຂັນໃນໂຄງການທີ່ມີຂະໜາດໃຫຍ່ ແລະ ສະລັບຊັບຊ້ອນຫຼາຍຂຶ້ນ. ການມີແຫຼ່ງວັດສະດຸກໍ່ສ້າງ ແລະ ແຮງງານທີ່ມີປະສົບການໃນການກໍ່ສ້າງຢ່າງກວ້າງຂວາງ ອັນເຮັດໃຫ້ເປັນຜົນສຳເລັດຂອງບໍລິສັດ.

The Company is a comprehensive construction provider which are prompt to submit the project proposal or enter the bidding competition of both government and private project that have put readiness to the Company to be a leading industrial developer of the country, the Company plans to invest in infrastructure development projects and property development projects with personnel with experienced in construction engineering, use of modern technology, and aim for bigger and more complex projects. The abundance of construction materials and experienced workers have contributed a success to the Company.

ຂ. ຄຸນນະພາບ ແລະ ມາດຕະຖານຂອງວຽກງານ / Quality and standard of the work:

ການຮັກສາຄຸນນະພາບ ແລະ ມາດຕະຖານຂອງວຽກງານເປັນເຫດຜົນຫຼັກທີ່ບໍລິສັດປະສົບຜົນສຳເລັດທີ່ມາຈາກປະຫວັດການດຳເນີນວຽກງານທີ່ດີຂອງບໍລິສັດ ທັງໃນດ້ານການເຮັດວຽກໃຫ້ແລ້ວຕາມກຳນົດເວລາ, ຄວາມໜ້າເຊື່ອຖື ແລະ ຄຸນນະພາບຂອງວຽກງານມີຄວາມສາມາດໃນການດຳເນີນງານຕາມສັນຍາ ແລະ ການບໍລິການລູກຄ້າດ້ວຍນ້ຳໃຈໃຫ້ເປັນຢ່າງດີ ເອົາໃຈໃສ່ໃນລາຍລະອຽດ ແລະ ຊື່ສັດຕໍ່ລູກຄ້າ.

Maintaining the quality and standard of work is the reason that the Company has been successful. From the beginning history of the Company, the Company managed to complete the work on time, with reliability and quality of work based on the contract, serves the customers with sincerity, detailed, and honestly.

ຄ. ການສົ່ງມອບໃຫ້ທັນກັບເວລາທີ່ກຳນົດ / Submitting the work on time

ວຽກງານກໍ່ສ້າງພື້ນຖານໂຄງລ່າງ ໂດຍສະເພາະແມ່ນຖະໜົນຫົນທາງເປັນວຽກທີ່ໃຫຍ່ ຕ້ອງໃຊ້ໄລຍະເວລາຍາວພໍສົມຄວນ ບໍລິສັດຕ້ອງການສົ່ງມອບວຽກງານໃຫ້ທັນກັບເວລາຕາມແຜນການທີ່ໄດ້ກຳນົດໄວ້ ເຊິ່ງບໍລິສັດເອງກໍມີຊື່ສຽງໃນດ້ານການສົ່ງມອບວຽກງານໃຫ້ກົງກັບເວລາ ຖືໄດ້ວ່າເປັນໜຶ່ງປັດໄຈຫຼັກໃນການປະສົບຜົນສຳເລັດຂອງທຸລະກິດຮັບເໝົາກໍ່ສ້າງທີ່ຕ້ອງໃຊ້ຄວາມຮັບຜິດຊອບທີ່ສູງມາເປັນໄລຍະເວລາຍາວນານ. ບໍລິສັດແມ່ນມີການບໍລິຫານງານຢ່າງເປັນລະບົບ ມີການວາງແຜນງານທຸກຂັ້ນຕອນ ພັດທະນາສັກກະຍະພາບການເຮັດວຽກຂອງບຸກຄະລາກອນຢ່າງຕໍ່ເນື່ອງ ເພື່ອໃຫ້ການປະຕິບັດງານມີປະສິດທິພາບ ແລະ ສຳເລັດພາຍໃນລະຍະເວລາທີ່ກຳນົດໄວ້.

The infrastructure development work, especially on the road construction is a time-consuming project. Therefore, the Company must hand over the works on time as planned. The Company is well known for the submitting the work on time which is an important factor for the Company's success that requires long-term responsibility. The Company has a systematic management by planning in each phase with continuous personnel empowerment to ensure effective implementation of work to finish on time.

ງ. ເອົາໃຈໃສ່ໃນລາຍລະອຽດຂອງໂຄງການ / Pays attention on the detail of the project

ບໍລິສັດແມ່ນມີການເອົາໃຈໃສ່ໃນລາຍລະອຽດໂຄງການຢ່າງຮອບຄອບໃນໂຄງການຕ່າງໆ ດ້ວຍຜູ້ບໍລິຫານ ແລະ ນັກວິສະວະກອນທີ່ມີປະສົບການສູງ, ມີຄວາມຊຳນານໃນການກໍ່ສ້າງຂົວ-ທາງ ແລະ ກໍ່ສ້າງອື່ນໆ ເພື່ອກວດສອບ ກິດຈະກຳໃນວຽກການກໍ່ສ້າງແຕ່ລະໂຄງການ ເຊິ່ງຊ່ວຍໃຫ້ບໍລິສັດ ມີການປັບປຸງປະສິດທິພາບຢູ່ສະເໝີ ແລະ ຫຼຸດຜ່ອນຕົ້ນທຶນການກໍ່ສ້າງໃນຮູບແບບຕ່າງໆ. ນອກຈາກນີ້, ບໍລິສັດ ມີແຜນວຽກງານທີ່ຈະບັນລຸເປົ້າໝາຍໂດຍ ພັດທະນາທາງດ້ານແນວຄິດໃນດ້ານການບໍລິຫານ, ການນຳໃຊ້ເຕັກໂນໂລຊີສະໄໝໃໝ່ ເພື່ອຊ່ວຍໃນການປັບປຸງ ປະສິດທິພາບ ແລະ ຫຼຸດຜ່ອນຕົ້ນທຶນການກໍ່ສ້າງໃນຮູບແບບຕ່າງໆຕໍ່ໄປ.

The Company pays the attention on the details in all projects with high experienced managers and engineers, expert in the road, bridge and other construction projects in order to monitoring all project activities which have contributed to the improvement continuously and therefore the decrease the construction costs in various ways. Moreover, the Company aims to achieve that target by developing management concept, use of modern technology to improve the performance as well as to decrease the construction costs.

ຈ. ຊື່ສັດ ເປັນທຳ ຕໍ່ຄູ່ຮ່ວມງານ / Being honest and fair to our colleagues

ບໍລິສັດແມ່ນມີຄວາມຊື່ສັດ ຈິງໃຈ ແລະ ເປັນທຳ ກັບພາກສ່ວນທີ່ກ່ຽວຂ້ອງທັງໃນພາກສ່ວນທີ່ກ່ຽວຂ້ອງກັບ ເຈົ້າຂອງໂຄງການ ທັງຜູ້ອອກແບບ ແລະ ຜູ້ຄວບຄຸມວຽກ ເນື່ອງຈາກວ່າຜູ້ອອກແບບເປັນບຸກຄົນທີ່ຮູ້ກ່ຽວກັບລາຍ ລະອຽດຂອງໂຄງການກໍ່ສ້າງຕ່າງໆ ເຊິ່ງຄວາມຊື່ສັດ ຈິງໃຈ ຍ້ອນເຫດຜົນນີ້ເອງ ຕັ້ງແຕ່ອະດີດທີ່ຜ່ານມາ ຈຶ່ງເຮັດໃຫ້ ບໍລິສັດກ້າວຂຶ້ນເປັນບໍລິສັດທີ່ມີຊື່ສຽງ, ມີຄວາມສະໜິດສະໜົມກັບລູກຄ້າ ມີສາຍພົວພັນທີ່ດີກັບຜູ້ອອກແບບ ຜູ້ຄວບ ຄຸມວຽກ ແລະ ຄູ່ຮ່ວມງານທຸກຝ່າຍມາໂດຍຕະຫຼອດ.

As being honest, sincere, and fair for all related stakeholders including the project owner, designer, and supervisor. Due to the fact that the designer knows the project in details. From the principles of being honest and sincere, these have led us to become a well-known company, with a good relationship among the supervisors, designers, and colleagues.

ສ. ການໄດ້ຮັບຄວາມເຊື່ອຖື ແລະ ໄວ້ວາງໃຈຈາກລູກຄ້າ / Being reliable and trusted by our customers

ຈາກຜົນງານຄວາມສຳເລັດໃນອະດີດທີ່ຜ່ານມາຂອງບໍລິສັດ ແມ່ນໄດ້ຮັບຄວາມໄວ້ວາງໃຈຈາກລູກຄ້າເປັນຢ່າງດີ ເຮັດໃຫ້ບໍລິສັດໄດ້ຮັບການຍອມຮັບຈາກລູກຄ້າເຈົ້າຂອງໂຄງການ ແລະ ໄດ້ຮັບການຕິດຕໍ່ຈາກໜ່ວຍງານພາກລັດໃຫ້ບໍລິສັດເຂົ້າຮ່ວມປະມູນໂຄງການຢ່າງຕໍ່ເນື່ອງ.

From the Company's previous success, the Company is reliable and trusted by the customers and the project owner. Since then, the Company has been regularly contacted by the government sector to attend the bidding competition.

ວຽກງານດ້ານຍຸດທະສາດອົງກອນ / Organizational Strategy

ຈາກຄວາມຕັ້ງໃຈໃນການມອບສິ່ງທີ່ດີທີ່ສຸດ ສູ່ຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈທີ່ໄດ້ຮັບຈາກລູກຄ້າ, ພວກເຮົາພ້ອມແລ້ວທີ່ຈະກ້າວໄປສູ່ເປົ້າໝາຍໃນອະນາຄົດ:

- ຂະຫຍາຍຖານລູກຄ້າໄປສູ່ພາກເອກກະຊົນ ທັ້ງໃນໂຄງການກໍ່ສ້າງ ແລະ ພັດທະນາພື້ນຖານໂຄງລ່າງຂະໜາດນ້ອຍ, ຂະໜາດກາງ ແລະ ຂະໜາດໃຫຍ່.
- ລິເລີ່ມໂຄງການພັດທະນາອະສັງຫາລິມະຊັບເພື່ອຕອບສະໜອງການຂະຫຍາຍຕົວຂອງຕົວເມືອງໃນທົ່ວປະ ເທດ.
- ຮັກສາຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈຈາກຖານລູກຄ້າທີ່ໄດ້ຮັບມາຕະຫຼອດໄລຍະເກືອບ 20 ປີ ດ້ວຍການໃຫ້ຄວາມສຳຄັນກັບຄຸນນະພາບ, ມາດຕະຖານ ການສົ່ງມອບງານກົງເວລາ ແລະ ບໍລິການທີ່ຊື່ສັດ ໃສ່ໃຈທຸກລາຍລະອຽດ.

From the ambition to provide the best services to gain credibility and trust amongst customers, we are ready to move forward to the future:

- Increase customer base to private sector for small, medium and mega size infrastructure development projects.
- Initiate real estate development portfolio to accommodate the growth of the cities in the country.
- Maintain trust and credibility of the existing customers who worked with us for 20 years by ensuring quality, standards, timely delivery and honesty with details oriented.

ວຽກງານດ້ານການເງິນການບັນຊີ / Financial Management

ການມອບພັນທະອາກອນໃຫ້ລັດປະຈຳປີ 2017

ລ/ດ	ລາຍການ	ຫົວໜ່ວຍ	ລວມມູນຄ່າ (ກີບ)
1	ອາກອນມູນຄ່າເພີ່ມ		546.565.000
2	ອາກອນເງິນເດືອນ		29.455.000
3	ອາກອນກຳໄລ		149.596.000
	ລວມ		**725.616.000**

The State Tax in nine-month 2017

Item	Details	Units	Total value (kip)
1	Value Added Tax		546.565.000
2	Payroll Tax		29.455.000
3	Profit Tax		149.596.000
	Total		**725.616.000**

I. ການດຳເນີນທຸລະກິດ ແລະ ຜົນການດຳເນີນງານປະຈຳປີ 2017 / Business Performance of the Year ending December, 2017


ທຸລະກິດຫຼັກຂອງບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ຄືການກໍ່ສ້າງ, ສ້ອມແປງ, ບຳລຸງຮັກສາຖະໜົນ, ຂົວ ແລະ ອື່ນໆ. ມີລູກຄ້າພຽງລາຍດຽວ ຄື ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໂຄງການທີ່ບໍລິສັດປະມູນໄດ້ ແລະ ພວມດຳເນີນງານຢູ່ໃນປີ 2017 ມີ **05** ໂຄງການ, ມີມູນຄ່າທັງໝົດຕາມສັນຍາ 440.478 ລ້ານກີບ ໃນນັ້ນມີໂຄງການໃໝ່ທີ່ປະມູນໄດ້ໃນປີ 2017 ຈຳນວນ 03 ໂຄງການ. ມີມູນຄ່າຕາມສັນຍາ 15.982 ລ້ານກີບ.

The main business operations of Phousy Construction and Development Public Company are construction, maintenance and habitation of roads, bridges and so on. Currently, there is only public sector or the government of Lao PDR as a client. There are in total of 5 projects that the

company possessed through bidding and are not under operations in 2017. The accumulated value of those projects are 440.478 million Kip, including two existing projects and newly added three new projects in 2017 with a total value of 15.982 million Kip.




➢ **ລາຍຮັບ - Income**



ບໍລິສັດມີລາຍຮັບລວມໃນ ປີ 2017 ເທົ່າກັບ 46.113 ລ້ານກີບ ເຊິ່ງໃນນັ້ນປະກອບມີລາຍຮັບ ຈາກການກໍ່ສ້າງ, ບູລະນະ ສ້ອມແປງ ຂົວ-ທາງ ມູນຄ່າ 45.384 ລ້ານກີບ ແລະ ລາຍໄດ້ອື່ນໆເທົ່າກັບ 729 ລ້ານກີບ, ເມື່ອທຽບໃສ່ລາຍຮັບປີ 2016 ເຫັນໄດ້ວ່າປະຕິບັດໄດ້ 46,13%, ເນື່ອງຈາກວ່າໃນຊ່ວງປີ 2017 ບໍລິສັດໄດ້ນຳໃຊ້ເງິນງົບປະມານແຜນການປະຈຳປີໄປລົງທຶນໃນໂຄງການພັດທະນາໃໝ່ 05 ໂຄງການ. ເພື່ອ ກະກຽມແຜນລາຍຮັບໃໝ່ໃນໄລຍະ 5 ປີ ແຕ່ 2018 ຫາ 2023 ແລະ ອີກປະການໜຶ່ງ ການຊຳລະເງິນຈາກເຈົ້າຂອງ ໂຄງການຊັກຊ້າບໍ່ໄປຕາມແຜນການ ຈຶ່ງເຮັດໃຫ້ການປະຕິບັດວຽກງານກໍ່ສ້າງ ແລະ ສ້ອມແປງທາງໃນປີ 2017 ບໍ່ໄດ້ ຕາມເປົ້າໝາຍທີ່ວາງໄວ້.

In 2017 The PCD has a total income of 46.113 million Kip which comprises of the income from road and bridge construction and maintenance with total value of 45.384 million Kip and the income from other sources of 729 million Kip; comparing to the income of 2016 which is equivalent to 46,13%, due to the PCD has utilized the budget of the annual work plan for investing and developing new 5 main projects. In order to prepare the new income plan for 5 years from the year 2018 to 2023 and the delay of the project owner is not implemented as planner. Therefore the implementation of road and bridge construction and maintenance plan for the year 2017 is not achieved as planned.


➢ **ກຳໄລສຸດທິ - Net Profit**



ບໍລິສັດມີກຳໄລສຸດທິປະຈຳປີ 2017 ເທົ່າກັບ 6.725 ລ້ານກີບ, ມີອັດຕາກຳໄລສຸດທິເທົ່າກັບ 14,58 ສ່ວນຮ້ອຍຂອງລາຍຮັບລວມ. ເມື່ອທຽບໃສ່ກຳໄລສຸທິຂອງປີ 2016 ເຫັນວ່າຫລຸດລົງ ເນື່ອງຈາກວ່າໃນຊ່ວງປີ 2017 ບໍລິສັດໄດ້ນຳໃຊ້ເງິນງົບປະມານແຜນການປະຈຳປີໄປລົງທຶນໃນໂຄງການພັດທະນາໃໝ່ 05 ໂຄງການ. ເພື່ອກະກຽມແຜນລາຍຮັບໃໝ່ໃນໄລຍະ 5 ປີ ແຕ່ 2018 ຫາ 2023. ແລະ ອີກປະການໜຶ່ງ ການຊຳລະເງິນຈາກເຈົ້າຂອງໂຄງການຊັກຊ້າບໍ່ໄປຕາມແຜນການ ຈຶ່ງເຮັດໃຫ້ການປະຕິບັດວຽກງານກໍ່ສ້າງ ແລະ ສ້ອມແປງທາງໃນປີ 2017 ບໍ່ໄດ້ຕາມເປົ້າໝາຍທີ່ວາງໄວ້.

The PCD recognized its 2017 net profit of 6.725 million Kip which is equivalent to 14,58% of total income when comparing to 2016 net profit, it is found that it decreased; due to the PCD has utilized the budget of the annual work plan for investing and developing new 5 main projects. In order to prepare the new income plan for 5 years from the year 2018 to 2023 and the delay of the project owner is not implemented as planner. Therefore the implementation of road and bridge construction and maintenance plan for the year 2017 is not achieved as planned.


➢ **ລວມຊັບສິນ - Total Assets**



ຊັບສິນລວມໃນວັນທີ 31 ທັນວາ 2017 ເທົ່າກັບ 946.844 ລ້ານກີບ. ລົດລົງເທົ່າກັບ 67.233 ລ້ານກີບ ເມື່ອທຽບໃສ່ຍອດລວມ ໃນວັນທີ 31 ທັນວາ 2016 ເຊິ່ງມີມູນຄ່າເທົ່າກັບ 1.014.077 ລ້ານກີບ ແລະ ການຫຼຸດລົງ ຂອງຊັບສິນນີ້ສາເຫດຫຼັກແມ່ນມາຈາກໃນ ວັນທີ 9 ພຶດສະພາ 2017, ທາງຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ ອອກແຈ້ງການ ເລກທີ 220/LSCO ເຖິງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໂດຍມີການແນະນຳໃຫ້ຫຼຸດ ມູນຄ່າຮຸ້ນກຳນົດ (par value) ຈາກ 2.000 ກີບ ມາ ເປັນ 1.000 ກີບ ຕໍ່ຮຸ້ນ ແລະ ໃຫ້ມີການຫຼຸດທຶນຈົດທະບຽນ ຈາກ 700.000 ລ້ານກີບ ເປັນ 500.000 ລ້ານກີບ ເຊິ່ງສຳເລັດການປ່ຽນທຶນຈົດທະບຽນທີ່ກະຊວງອຸດສາຫະກຳ ແລະ ການຄ້າໃນວັນທີ 27 ມິຖຸນາ 2017.

The total asset as of September 30, 2017, is 946.844 million Kip with a decreased amount of 67.233 million Kip when compared to the total asset figure of December 31, 2016 which was 1.014.077 million Kip. The reasons for having decreased total asset value is because on May 9, 2017 the LSCO had issued the Notice no. 220/LSCO to Phousy Construction and Development Public Company advising to reduce the par value from 2000 Kip per shares to 1000 Kip per share and also to reduce the registered capital from 700.000 million Kip to 500.000 million Kip with the Ministry of Industry and Commerce on 27 June, 2017.

- **ລວມໜີ້ສິນ - Total Liabilities**




ໃນວັນທີ 31 ທັນວາ 2017 ຍອດໜີ້ສິນລວມມີການເພີ່ມຂຶ້ນເປັນ 142.090 ລ້ານກີບ ຈາກ ວັນທີ 31 ທັນວາ 2016 ທີ່ມີມູນຄ່າຢູ່ 110.588 ລ້ານກີບ. ເພີ່ມຂຶ້ນ 31.502 ລ້ານກີບ.

ສາເຫດເນື່ອງມາຈາກການລົງທຶນເຂົ້າໃນໂຄງການກໍ່ສ້າງສ້ອມແປງຂົວ-ທາງຂອງລັດຖະບານ. ບໍລິສັດຕ້ອງໄດ້ລົງ ທຶນກ່ອນ 100% ພາຍຫຼັງການດຳເນີນງານສຳເລັດໄປແຕ່ລະໄລຍະຈຶ່ງມີການກວດກາ ແລະ ຮັບຊຳລະຄືນຈາກ ລັດຖະບານ, ເຊິ່ງຈະເຫັນໄດ້ວ່າຍອດໜີ້ຕ້ອງຮັບຈາກລັດຖະບານໃນວັນທີ 31 ທັນວາ 2017 ມີມູນຄ່າສູງເຖິງ 463.336 ລ້ານກີບ. ດັ່ງນັ້ນ, ບໍລິສັດຈຶ່ງຈຳເປັນຕ້ອງໄດ້ເຂົ້າຫາແຫຼ່ງທຶນກູ້ຢືມເພື່ອມາເປັນທຶນໝຸນວຽນໃນການສືບຕໍ່ ດຳເນີນໂຄງການ ເຊັ່ນ ແຫຼ່ງທຶນກູ້ຢືມຈາກສະຖາບັນການເງິນຕ່າງໆ.

As of December 31, 2017, the total liabilities increased to 142.090 million Kip from December 31, 2016 which valued at 110.588 million Kip; an increase of 31.502 million Kip.

The reason is that the road and bridge construction and maintenance projects were contracted by the government of Lao PDR in the form of Build and Transfer basis resulting in the company to invest first of 100% of the project cost and collect the payment after a period of time of a certain completion of the work progress which must be inspected and certified by the project owner (aka the government of Lao PDR). It can be seen that the total liability as of December 31, 2017, has high value of 463.336 million Kip. Therefore, PCD has to obtain loans from the financial institutes.

➢ **ລວມສ່ວນທຶນຈາກຜູ້ຖືຮຸ້ນ - Total Share Capital**




ຫົວໜ່ວຍ : ລ້ານກີບ	Unit : million Kip	31 ທັນວາ 2017	31 ທັນວາ 2016
ທຶນຈົດທະບຽນ	Registered Capital	500.000	700.000
ທຶນຈາກການຈຳໜ່າຍຮຸ້ນ	Ordinary Share Issued	82.000	0
ບັນຊີສ່ວນເກີນຈາກການຈຳໜ່າຍຄ່າຮຸ້ນ	Share Premium Account	12.540	0
ເງິນສຳຮອງຕາມກົດໝາຍ	Legal Reserve	11.572	10.899
ກຳໄລສະສົມ	Retain Earnings	198.642	192.591
ລວມທຶນຈາກຜູ້ຖືຮຸ້ນ	**Total Share Capital**	**804.754**	**903.489**

ວັນທີ 31 ທັນວາ 2017 ທຶນຈົດທະບຽນໄດ້ຫຼຸດລົງ ສາເຫດຍ້ອນໃນ ວັນທີ 9 ພຶດສະພາ 2017, ທາງຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອອກແຈ້ງການ ເລກທີ 220/LSCO ເຖິງ ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ໂດຍມີການແນະນຳໃຫ້ຫຼຸດມູນຄ່າ ຮຸ້ນກຳນົດ (par value) ຈາກ 2.000 ກີບ ມາ ເປັນ 1.000 ກີບ ຕໍ່ ຮຸ້ນ ແລະ ໃຫ້ມີການຫຼຸດທຶນຈົດທະບຽນຈາກ 700.000 ລ້ານກີບ ເປັນ 500.000 ລ້ານກີບ ເຊິ່ງສຳເລັດການປ່ຽນ ທຶນຈົດທະບຽນທີ່ກະຊວງອຸດສາຫະກຳ ແລະ ການຄ້າ ໃນວັນທີ 27 ມິຖຸນາ 2017.

On 31 December, 2017 the registered capital was decreased because on May 9, 2017 the LSCO had issued the Notice no. 220/LSCO to Phousy Construction and Development Public Company advising to reduce the par value from 2.000 Kip per shares to 1.000 Kip per share and also to reduce the registered capital from 700.000 million Kip to 500.000 million Kip with the Ministry of Industry and Commerce on 27 June, 2017.

➢ **ອັດຕາສ່ວນໜີ້ຕໍ່ທຶນ - Debt /Equity Ratio**



ອັດຕາສ່ວນໜີ້ຕໍ່ທຶນໃນປີ 2017 ເຫັນວ່າເພີ້ມຂຶ້ນເທົ່າກັບ 0,06 ເທ່ົາ ເມ່ືອທຽບໃສ່ອັດຕາສ່ວນໜີ້ຕໍ່ທຶນໃນ ປີ 2016. ສາເຫດມາຈາກບໍລິສັດມີການກູ້ເງິນເພ້ີມ ນໍາສະຖາບັນການເງິນ ແລະ ບໍລິສັດໃນເຄືອ ເຂ້ົາມາເພ່ືອນໍາໃຊ້ເຂ້ົາ ໃນການບໍລິຫານວຽກງານຂອງໂຄງການຕ່າງໆ. ໂດຍຕາມຫລັກເກນແລ້ວ ການທ່ີມີໜ້ີສິນຕໍ່ທຶນຕ່ໍາກ່ວາ 1 ຖ້ືວ່າດ.ີ ເຊ່ືງສະແດງໃຫ້ເຫັນຄວາມສ່ຽງຕໍ່ພາລະໜ້ີສິນມ.ີໜ້ອຍ.

Debt /Equity Ratio in the year 2017 has an increase of 0,06 times in comparing **Debt /Equity Ratio in the year 2016. The main reason comes from the increase of loans from the financial institutions and business portfolio, which join and use the budget for the projects' administrative cost. In principle Debt /Equity Ratio is lower than one. In the meantime, it is good and shows that the risk per debt has less.**

I. ແຜນການດຳເນີນງານປະຈຳປີ 2018 / Annual Work Plan for the year 2018

1. ແຜນການລາຍຮັບປະຈຳປີ 2018 / Annual Revenue Plan for the Year 2018

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ມີເປົ້າໝາຍສູ້ຊົນໃນການກໍ່ສ້າງຂົວທາງປະຕິບັດບໍລິມາດໃຫ້ບັນລຸເປົ້າໝາຍ. ໂຄງການບ້ານອູໃຫ້ໄດ້ 41,72% ມູນຄ່າ 143.367 ລ້ານກີບ, ໂຄງການທາງກົ່ວເຈຍໃຫ້ໄດ້ 55,37% ມູນຄ່າ 80.881 ລ້ານກີບ ແລະ ໂຄງການທາງອັດຕະປືໃຫ້ໄດ້ ມູນຄ່າ 40.182 ລ້ານກີບ.

Phousy Construction and Development Public Company determined its goals for implementing it's the volume of project as planned. Ban-Ou Road Project shall achieve to 41.72% of the value of 143,367 million Kip, KiewChia Road Project shall achieve to 55,37% of the value of 80,881 million Kip and Attapeu Road Project shall achieve the value of 40,182 million Kip

❖ **ຕາຕະລາງແຜນລາຍຮັບໂຄງການກໍ່ສ້າງຂົວ-ທາງ / Table for Revenue Bridge and Road Construction Project**

(ຫົວໜ່ວຍ/Currency 1 ລ້ານ/Million)

ຊື່ໂຄງການ Project Name	ປະຕິບັດໄດ້ຮອດປີ 2017 Implemented plan 2017		ແຜນສູ້ຊົນປະຕິບັດ 2018 Proactive Plan 2018		ລວມປະຕິບັດໄດ້ທັງໝົດ Total	
	(LAK)	%	(LAK)	%	(LAK)	%
ໂຄງການທາງບ້ານອູ Ban-Ou Road Project	156.472	45,54	143.367	41,72	299.839	87,26
ໂຄງການທາງກົ່ວເຈຍ Kiewjear Road Project	36.096	44,63	44.785	55,37	80.881	100,00
ໂຄງການທາງອັດຕະປື Attapeu Road Project			40.182		40.182	-
ລວມທັງໝົດ Total	**192.568**		228.334		**420.902**	

2. ແຜນພັດທະນາໂຄງການໃໝ່ປະຈຳປີ 2018-2019 / New Project Plan for fiscal year 2018-2019

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ ມີເປົ້າໝາຍໃນການພັດທະນາໂຄງການໃໝ່ປະຈຳປີ 2018 – 2019 ດັ່ງນີ້: Phousy Construction and Development Public Company aims developing new project for fiscal year 2018-2019 as follows:

2.1 ໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ປາກເຊ ຊ່ວງທີ 03 ສະຫວັນນະເຂດ - ສາລະວັນ 128 ກມ ກຳລັງສຳຫຼວດເພື່ອສະເໜີລາຄາ.The Express Way Project from Vientiane to Pakse for the third route

allocation from Savannakhet Province to Saravan Province, with the distance of 128 Km is considering one of three targeted firms for conducting a technical survey and drafting feasibility study.

- ກິດຈະກຳ: ຢູ່ໃນຂັ້ນຕອນເຊັນບົດບັນທຶກ MOU ກັບກະຊວງໂຍທາທິການ ແລະ ຂົນສົ່ງ. ລົງສຳຫຼວດ ອອກແບບປະເມີນລາຄາເພື່ອສະເໜີຕໍ່ລັດຖະບານພິຈາລະນາຮັບຮອງເພື່ອກໍ່ສ້າງໃນປີ 2019 - 2023. On process of preparing to sign the Memorandum of Understanding (MOU) with Ministry of Public Work and Transport. It is expected that the conduction of design survey and evaluation on price aims to propose to Lao government for approval in the construction for from 2019-2023.

2.2 ໂຄງການກໍ່ສ້າງທາງປູຢາງສອງຊັ້ນຢູ່ແຂວງບໍ່ແກ້ວລວງຍາວ 57,76 ກມ ມູນຄ່າ 226 ຕື້. 2 Levels asphalt paving project by pass with 57.76 Km of length and total value of 226 billion.

- ກິດຈະກຳ: ຢູ່ໃນຂັ້ນຕອນສະເໜີເຂົ້າແຜນງົບປະມານຕໍ່ສະພາແຫ່ງຊາດເພື່ອກໍ່ສ້າງໃນປີ 2018 – 2019. On process of proposing the activity into the budget of Lao National Assembly for approval between year 2018 and 2019.

2.3 ໂຄງການກໍ່ສ້າງທາງຊາຍແດນລາວ-ກຳປູເຈຍລວງຍາວ 154 ກມ ມູນຄ່າ 330 ຕື້. Road Construction Project along borders between Laos to Cambodia with the distance of 154 Km and its value of 330 billion.

- ກິດຈະກຳ: ຢູ່ໃນຂັ້ນຕອນສະເໜີຮັບຮອງແບບ ແລະ ລາຄາ ເພື່ອສະເໜີເຂົ້າແຜນໃນປີ 2018 ແລະ ກໍ່ສ້າງ ໃນປີ 2019. On process of endorsing design and price in order to propose in the work plan for fiscal year 2018 and for starting construction in 2019.

2.4 ໂຄງການກໍ່ສ້າງທາງປູຢາງສອງຊັ້ນແຕ່ຂົວນ້ຳດົງຫາຕາດກວາງຊີ ແຂວງຫລວງພະບາງລວງຍາວ 25 ກມ ມູນຄ່າ 154 ຕື້. 2 Levels asphalt paving project by pass from Namdong bridge to Kuangsy Water Fall in Luangprabang with 25 km of length and its value of 154 billion.

- ກິດຈະກຳ : ຢູ່ໃນຂັ້ນຕອນສະເໜີຜ່ານແບບ ແລະ ລາຄານຳພະແນກໂຍທາແຂວງຫລວງພະບາງ ແລະ ກະຊວງໂຍທາປະຈຳປີ 2018 ເລີ່ມກໍ່ສ້າງປີ 2019. On process of proposing design and price to the Department of Public Work and Transport in Luanprabang Province.

2.5 ໂຄງການກໍ່ສ້າງທາງ 4 ເລນປູເບຕົ້ງໃນຕົວເມືອງຫ້ວຍຊາຍ ແຂວງບໍ່ແກ້ວ ລວງຍາວ 6.17 ກມ ມູນຄ່າ 126 ຕື້. Concrete road construction project for 4 lanes in Huaxay City, Borkeo Province with 6.17 Km of length and its value of 126 billion.

- ກິດຈະກຳ : ຢູ່ໃນຂັ້ນຕອນສະເໜີເຂົ້າແຜນ ຜ່ານສະພາແຫ່ງຊາດ ໃນປີ 2018 ເລີ່ມລົງມືກໍ່ສ້າງປີ 2019. On process of proposing the activity into the budget of Lao National Assembly for year 2018 and for starting construction in 2019.



❖ **ຕາຕະລາງແຜນພັດທະນາໂຄງການ / Table for New Propose budget into Lao National Assembly.**

(ຫົວໜ່ວຍ/Currency 1 ລ້ານ/Million)

ລ/ດ Item	ຊື່ໂຄງການ Project Name	ກິດຈະກຳ Activities	ມູນຄ່າ Amount	ເລີ່ມໂຄງການ Start Project
1	ໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ປາກເຊ ຊ່ວງທີ 03 ສະຫວັນນະເຂດ - ສາລະວັນ 128 ກມ. The Express Way Project from Vientiane to Pakse for the third route allocation from Savannakhet Province to Saravan Province, with the distance of 128 Km.	ເຊັນບົດບັນທຶກ MOU ກັບກະຊວງໂຍທາທິການ ແລະ ຂົນສົ່ງ. Sign MOU with Ministry of Public Work and Transport.		2019 – 2023
2	ໂຄງການກໍ່ສ້າງທາງປູຢາງສອງຊັ້ນຢູ່ ແຂວງບໍ່ແກ້ວລວງຍາວ 57.76 ກມ. 2 Levels asphalt paving project by pass with 57.76 km, in Bokeo province.	ສະເໜີເຂົ້າແຜນງົບປະມານຕໍ່ສະພາແຫ່ງຊາດ. Propose budget into Lao National Assembly	226	2018 – 2019
3	ໂຄງການກໍ່ສ້າງທາງຊາຍແດນລາວ-ກຳປູເຈຍລວງຍາວ 154 ກມ. Road Construction Project along borders between Laos to Cambodia with the distance of 154 Km.	ສະເໜີຮັບຮອງແບບ ແລະ ລາຄາ ເພື່ອສະເໜີເຂົ້າແຜນໃນປີ 2018. Propose to endorse the design and price in order to propose budget into annual work plan for fiscal year 2018.	330	2019
4	ໂຄງການກໍ່ສ້າງທາງປູຢາງສອງຊັ້ນແຕ່ ຂົວນ້ຳດົງ ຫາ ຕາດກວາງຊີ ແຂວງ ຫລວງພະບາງ ລວງຍາວ 25 ກມ. 2 Levels asphalt paving project by pass from Namdong bridge to Kuangsy Water Fall in Luangprabang with 25 km of length.	ສະເໜີຜ່ານແບບ ແລະ ລາຄານຳພະແນກໂຍທາ ແຂວງຫລວງພະບາງ ແລະ ກະຊວງໂຍທາປະຈຳປີ 2018. Propose design and price to the Department of Public Work and Transport in Luanprabang Province 2018.	154	2019
5	ໂຄງການກໍ່ສ້າງທາງ 4 ເລນ ປູເບຕົ້ງໃນ ຕົວເມືອງຫ້ວຍຊາຍ ແຂວງບໍ່ແກ້ວ ລວງຍາວ 6.17 ກມ. Concrete road construction project for 4 lanes in Huaxay City, Borkeo Province with 6.17 Km of length.	ສະເໜີເຂົ້າແຜ່ນຜ່ານສະພາແຫ່ງ ຊາດ ໃນປີ 2018. Propose budget into Lao National Assembly year 2018.	126	2019





Phousy Construction and Development Public
5th Floor, Vientiane Plaza Hotel, Sailom Road, Hatsady Village,
Chanthabouly District, Vientiane, Lao PDR.
Tel/Fax: (856-21)265394; E-mail: info@pcdlao.com ; website: www.pcdlao.com